**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການແຂວງ

ເລກທີ 776/ຫວຂ

ອັດຕະປື, ວັນທີ 27 ກັນຍາ 2017

# ແຈ້ງການ

**ເຖິງ:** - ຫົວໜ້າກອງບັນຊາການທະຫານແຂວງ

- ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ
- ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ
- ບໍລິສັດ ລາດຊະວົງ ກໍ່ສ້າງຂົວ-ທາງ

**ເລື່ອງ:** ການຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງຍຸດທະສາດຊາຍແດນ ລາວ-ຫວຽດນາມ

- ອີງຕາມ ການຕົກລົງເຫັນດີເປັນເອກະພາບໃນກອງປະຊຸມຄະນະປະຈຳພັກແຂວງ ຮ່ວມກັບເຈົ້າແຂວງ-ຮອງເຈົ້າແຂວງ ຄັ້ງວັນທີ 26 ກັນຍາ 2017.

ຫ້ອງວ່າການແຂວງ ຖືເປັນກຽດແຈ້ງການຕາມການຕົກລົງ ແລະ ຊີ້ນຳຂອງກອງປະຊຸມຄະນະປະຈຳພັກແຂວງ ຮ່ວມ ກັບເຈົ້າແຂວງ-ຮອງເຈົ້າແຂວງ ມາຍັງທ່ານ ຊາບວ່າ: ການປະຕິບັດໂຄງການກໍ່ສ້າງເສັ້ນທາງຍຸດທະສາດຊາຍແດນ ລາວ-ຫວຽດນາມ ແມ່ນເປັນໂຄງການທີ່ສະພາຮັບຮອງໃຫ້ປະຕິບັດແລ້ວ, ແຕ່ວ່າການຈັດຕັ້ງປະຕິບັດຕົວຈິງແມ່ນໃຫ້ພະແນກ ຍທຂ ແຂວງ ເປັນຜູ້ຕິດຕາມຢູ່ຂັ້ນທ້ອງຖິ່ນ, ບໍ່ຈຳເປັນຕ້ອງໄດ້ແຕ່ງຕັ້ງຄະນະຮັບຜິດຊອບຂຶ້ນມາອີກ, ການປະຕິບັດຕົວຈິງຫາກຕິດພັນກັບພາກສ່ວນໃດຈຶ່ງໃຫ້ປະສານກັບພາກສ່ວນນັ້ນ ເຊັ່ນ: ການຕັດໄມ້ ແລະ ເຄື່ອນຍ້າຍໄມ້ອອກຈາກແລວທາງ, ການນຳໃຊ້ບໍດິນ ແລະ ແຮ່ທາດຕ່າງໆ.

ມອບໃຫ້ກອງບັນຊາການທະຫານແຂວງ ແຈ້ງໄປຍັງກະຊວງປ້ອງກັນປະເທດ (ກົມໃຫຍ່ເສນາທິການ ເພື່ອຮັບຊາບ)

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງດ້ວຍ.

**ຫົວໜ້າຫ້ອງວ່າການແຂວງ**

ບ່ອນນຳສົ່ງ:

| | |
|---|---|
| - ຄະນະປະຈຳພັກແຂວງ | 09 ສະບັບ ( ເພື່ອຊາບ ) |
| - ຄະນະຫ້ອງວ່າການແຂວງ | 06 ສະບັບ ( ເພື່ອຕິດຕາມ ) |
| - ເຈົ້າເມືອງຊານໄຊ, ພູວົງ | 02 ສະບັບ ( ເພື່ອຊາບ ) |
| - ເປົ້າໝາຍຂ້າງເທິງ | 04 ສະບັບ ( ເພື່ອປະຕິບັດ ) |
| - ຂະແໜງພັກ, ລັດ, ປະເມີນຜົນ | 03 ສະບັບ ( ເພື່ອຕິດຕາມ ) |
| - ເກັບຮັກສາໄວ້ | 01 ສະບັບ |

ແຂວງອັດຕະປື ຫ້ອງວ່າການ

**ທະນູໄຊ ບັນຊາລິດ**